## ການບໍລິການ**Health Home** ເອົາໃຫ້:

- ການກຳກັບນຳການເບິ່ງແຍງດູແລຄົບຖ້ວນ.
- ການປະສານງານການເບິ່ງແຍງດູແລ ແລະ ການສົ່ງເສີມສຸຂະພາບ.
- ແຜນການຂອງການປ່ຽນຕໍ່ມາ.
- ການອູ້ມຊູສ່ວນບຸກຄົນ ແລະ ຄອບຄົວ.
- ການສົ່ງຕໍ່ໄປຫາການບໍລິການອູ້ມຊູຕາມຊຸມນຸມຊົນ ແລະ ສັງຄົມທີ່ກ່ຽວຂ້ອງນຳ.

*"... ພະນັກງານເບິ່ງແຍງດູແລສ່ວນຕົວຂອງຂ້າພະເຈົ້າເຄີຍໄປນຳໃນເວລາຫມາຍນັດພົບນຳທ່ານຫມໍຂອງຂ້າພະເຈົ້າ, ຊຶ່ງໄດ້ຊ່ວຍຂ້າພະເຈົ້າໃຫ້ເຂົ້າໃຈແບບວິທີຫລືເພື່ອຈະແກ້ໄຂບັນຫາຂອງຂ້າພະເຈົ້າບາງຄຳຖາມ."*

—ຄົນເຈັບໃນການປິ່ນປົວຊຳເຮື້ອ



Washington State
Health Care Authority
P.O. Box 42719
Olympia, WA 98504-2719

ADDRESS SERVICE REQUESTED



ເພື່ອຊີວິດ
ດີກວ່າເກົ່າ!

ການບໍລິການແນວໃໝ່ທີ່ບໍ່ຄິດ
ຄ່ານຳທ່ານ.

# ເພື່ອຊີວິດ ດີກວ່າເກົ່າ!

ໃຊ້ການບໍລິການ **'Health Home'** ເພື່ອຈະສົ່ງເສີມຊີວິດຂອງທ່ານໂດຍການປະສານງານ ແລະ ການບໍລິການສັງຄົມຂອງທ່ານ.



HCA 22-850 LA (7/14) Laotian




## ຜົນສະທ້ອນຕໍ່ທ່ານແມ່ນຫຍັງແດ່?

ການບໍລິການ Health Home ອູ້ມຊູທ່ານຢູ່ໃນການເດີນທາງສຸຂະພາບຂອງທ່ານ. ການເຂົ້າຮ່ວມຂອງທ່ານແມ່ນຕາມສະມັກໃຈ. ມັນບໍ່ສະທ້ອນເຖິງເງື່ອນໄຂໄດ້ຮັບສຳລັບການບໍລິການອື່ນໆຫລືສິດທິໃນການຮ້ອງທຸກ ແລະ ອຸທອນຂອງທ່ານ.

**ເພື່ອລາຍລະອຽດເພີ້ມເຕີມ**
ເມດິເຄດ໌: 1-800-562-3022

## ການບໍລິການ Health Home ແມ່ນຫຍັງ?

**ການບໍລິການ Health Home ບໍ່ແມ່ນສະຖານທີ່.** ມັນແມ່ນການບໍລິການຊຸດນຶ່ງເພື່ອຈະອູ້ມຊູທ່ານຖ້າຫາກວ່າທ່ານມີສະພາບຊຳເຮື້ອທີ່ຮ້າຍແຮງແລະ ມີຄວາມຕ້ອງການດ້ານການພະຍາບານ ຫລື ການບໍລິການສັງຄົມຫລາຍກວ່າຢ່າງນຶ່ງ.

ການບໍລິການ Health Home ສາມາດເຮັດໃຫ້ທຸກສິ່ງທຸກຢ່າງດຳເນີນຕໍ່ໄປໄດ້ສະດວກກວ່າລະຫວ່າງການອູ້ມຊູດ້ານການພະຍາບານ ແລະ ການບໍລິການສັງຄົມຂອງທ່ານ. ອັນນີ້ຈະຊ່ວຍລຸດຜ່ອນການປົ່ນໂຮງພະຍາບານ ແລະຫ້ອງສຸກເສີນແລະ ການອູ້ມຊູສຸຂະພາບຂອງທ່ານ, ຄວາມຢູ່ດີມີແຮງໂດຍທົ່ວໄປ, ແລະ ການເບິ່ງແຍງດູແລຕົນເອງ.

## ການບໍລິການທຳງານແນວໃດ?

- ການບໍລິການ Health Home ຈະຖືກກຳກັບນຳໂດຍຜ່ານຫ້ອງການປະສານງານການເບິ່ງແຍງດູແລ.
- ຜູ້ປະສານງານການເບິ່ງແຍງດູແລຈະພົບກັບທ່ານເພື່ອຈະຊ່ວຍເຫລືອທ່ານໃນການອອກແບບແຜນການນຳສຸຂະພາບຂອງທ່ານ.
- ຜູ້ປະສານງານການເບິ່ງແຍງດູແລຈະຕິດຕໍ່ຫາທ່ານສະເມີແລະຫ້ອງການທີ່ອູ້ມຊູທ່ານເພື່ອຈະຮັກສາໃຫ້ທຸກສິ່ງທຸກຢ່າງເດີນສະດວກ.
- ຖ້າຫາກວ່າທ່ານເຂົ້າແລະອອກມາຈາກໂຮງພະຍາບານ,ຜູ້ປະສານງານການເບິ່ງແຍງດູແລຈະຊ່ວຍເຫລືອໃນການວາງແຜນການປົ່ນຕໍ່ມາຂອງທ່ານ.
- ຖ້າຫາກວ່າທ່ານມີບັນຫານຳການໄດ້ຮັບການອູ້ມຊູທີ່ທ່ານຕ້ອງການ,ຜູ້ປະສານງານການເບິ່ງແຍງດູແລສາມາດຊ່ວຍເຫລືອທ່ານໃນການເຮັດວຽກນຳທ່ານໝໍ ແລະ ຫ້ອງການສຸຂະພາບໂຣກຈິດ ຫລື ຫ້ອງການຕິດຢາເສບຕິດເພື່ອຈະໄດ້ຮັບການເບິ່ງແຍງດູແລ.

## ການບໍລິການເຫລົ່ານີ້ແມ່ນສຳລັບທ່ານບໍ່?

**ທ່ານມີເງື່ອນໄຂໄດ້ຮັບຖ້າຫາກວ່າທ່ານ:**

- ຢູ່ໃນໂຄງການເມດິເຄດ໌ ແລະ ເມດິແຄຣ໌.
- ມີສະພາບຊຳເຮື້ອທີ່ຮ້າຍແຮງ.
- ກຳລັງສ່ຽງອັນຕະລາຍສຳລັບເທື່ອທີສອງ.
- ມີບັນຫາສຸຂະພາບຮ້າຍແຮງຊຶ່ງຕາມທັມມະດາແລ້ວຕ້ອງມີຜູ້ບໍລິການຫລາຍກວ່າຄົນນຶ່ງ.

## ອັນນີ້ຈະຕົນເປັນລາຄາເທົ່າໃດ?

**ບໍ່ຕ້ອງຈ່າຍຫຍັງ - ມັນເປັນການບໍລິການຟຣີ.**

## ອັນນີ້ຈະເຮັດຫຍັງແດ່ໃຫ້ແກ່ທ່ານ?

- ເອົາການອູ້ມຊູໃຫ້ເພື່ອຈະຊ່ວຍທ່ານກຳກັບນຳຄວາມຕ້ອງການດ້ານການພະຍາບານ ແລະ ສັງຄົມທີ່ຫຍຸ້ງຍາກສັບສົນ.
- ເອົາຄວາມຊ່ວຍເຫລືອໃຫ້ເພື່ອຈະຊອກຫາ ແລະ ໄດ້ການບໍລິການລະຍະຍາວຢູ່ໃນຊຸມຊົນຂອງທ່ານ.

## ທ່ານຈະເລີ້ມຕົ້ນໄດ້ແນວໃດ?

- ເມື່ອຜູ້ປະສານງານການເບິ່ງແຍງດູແລຕິດຕໍ່ຫາທ່ານ, ຈົ່ງບອກເຂົາເຈົ້າວ່າທ່ານຢາກຈະເຂົ້າຮ່ວມນຳ.
- ແລ້ວ, ເຮັດວຽກນຳຜູ້ປະສານງານການເບິ່ງແຍງດູແລ, ເຮັດແຜນການກະທຳດ້ານສຸຂະພາບ, ແລະ ເລີ້ມຕົ້ນ!

## ອັນນີ້ຈະປ່ຽນບຸກຄົນທີ່ທ່ານກຳລັງເຮັດວຽກນຳໃນດຽວນີ້ບໍ່?

ທ່ານສາມາດດຳເນີນທີ່ຈະເຮັດວຽກຕໍ່ໄປນຳຄົນດຽວກັນ - ໂຄງການມີແຕ່ຈະຕື່ມອີກຄົນນຶ່ງເຂົ້າໃສ່ເພື່ອຈະຊ່ວຍເຫລືອທ່ານອອກແບບແຜນແລະຕິດຕາມນຳແຜນການເຮັດນຳສຸຂະພາບຂອງທ່ານ. ທ່ານສາມາດດຳເນີນທີ່ຈະເຮັດວຽກນຳ:

- ຜູ້ໃຫ້ການເບິ່ງແຍງດູແລທີ່ຖືກຈ່າຍເງິນໃຫ້ຂອງທ່ານ.
- ຫ້ອງການເຂດກ່ຽວກັບຄົນແກ່ຂອງທ່ານ ແລະ ຜູ້ກຳກັບເອກສານອື່ນໆ.
- ຄົນອື່ນທີ່ທ່ານເຮັດວຽກນຳ (ຕົວຢ່າງ, ທ່ານໝໍ, ນາຍໝໍ,ໝໍບຳບັດຮ່າງກາຍ, ຜູ້ປຶກສາສຸຂະພາບໂຣກຈິດ,ແລະພະນັກງານການຕິດຢາເສບຕິດ) .

**ການປຶກສາຕາມໃຈຊອບ**

ເພື່ອຄວາມຊ່ວຍເຫລືອໃຫ້ເຂົ້າໃຈການບໍລິການ **Health Home** ແລະ ເພື່ອຈະເບິ່ງວ່າມັນເຫມາະສົມສຳລັບທ່ານ ຫລື ບໍ່, ໂທຫາ **1-855-567-0252.**

Washington State
Health Care Authority

ການບໍລິການ **Health Home** ຈະຖືກກຳກັບນຳໂດຍຜ່ານຫ້ອງການເມດິເຄດ໌ຂອງຣັດດ້ວຍຄວາມປະສານງານຮ່ວມກັນນຳເມດິແຄຣ໌.

Washington State
Department of Social & Health Services
*Transforming lives*